## 1. ຄວາມເປັນມາ

ດັ່ງທີ່ຮັບຮູ້ນຳກັນແລ້ວວ່ານ້ຳ ແມ່ນເປັນຊັບພະຍາກອນທຳມະຊາດສະນິດໜຶ່ງທີ່ມີຈຳກັດ ແລະມັນກໍ່ມີຄວາມສຳຄັນຕໍ່ຄົນໃນການດຳລົງຊີວິດປະຈຳວັນ ແລະການພັດທະນາເສດຖະກິດສັງຄົມຂອງພວກເຮົາ ໂດຍສະເພາະຕໍ່ການຜະລິດກະສິກຳ.

ເຖິງແມ່ນວ່າ ປະເທດລາວເຮົາຈະອຸດົມສົມບູນໄປດ້ວຍ ແມ່ນ້ຳລຳເຊແຕ່ວ່າກໍ່ມີການຫົດແຫ້ງໄປ ອີງຕາມລະດູການ ແລະການນຳໃຊ້, ເຊິ່ງພວກເຮົາເອງແມ່ນບໍ່ສາມາດທີ່ຈະຜະລິດທົດແທນໄດ້.

ໃນວຽກງານການຜະລິທາງດ້ານກະສິກຳ, ນ້ຳແມ່ນເປັນປັດໃຈຫຼັກໃນດ້ານປູກຝັງກໍ່ຄືລ້ຽງສັດ. ພືດມີຄວາມຕ້ອງການນ້ຳໃນການຜະລິດທາດອາຫານ ແຕ່ກໍ່ບໍ່ແມ່ນວ່າພືດທຸກຊະນິດຈະຕ້ອງການນ້ຳ ໃນປະລິມານທີ່ເທົ່າກັນສະເໝີໄປ, ຄວາມຕ້ອງການນ້ຳຂອງພືດແມ່ນຂຶ້ນກັບຊະນິດຂອງພືດ ແລະສະພາບພູມມີອາກາດເປັນຕົ້ນຕໍ່, ສະນັ້ນການຈັດພິມເອກະສານກ່ຽວກັບຄວາມຕ້ອງການນ້ຳຂອງພືດແມ່ນມີຄວາມສຳຄັນທີ່ສຸດ ເນື່ອງຈາກການສະໜອງນ້ຳໃຫ້ແກ່ພືດໃນປະລິມານທີ່ຫຼາຍເກີນໄປກໍ່ຈະເຮັດໃຫ້ມີຜົນເສຍໄດ້ເຊັ່ນກັນເອກະສານສະບັບນີ້ແມ່ນມີຈຸດປະສົງ ເພື່ອສະເໜີໃຫ້ຮູ້ກ່ຽວກັບຄວາມຕ້ອງການນ້ຳຂອງບາງຊະນິດພືດ ແລະເຂດການຜະລິດເປັນຫຼັກ. ຫວັງວ່າຂໍ້ມູນເຫຼົ່ານີ້ຈະເປັນປະໂຫຍດສຳລັບທ່ານ ຜູ້ທີ່ມີຄວາມຕ້ອງການເພື່ອນຳໃຊ້ເຂົ້າໃນການຄິດໄລ່, ຄຳນວນການໃຫ້ນ້ຳແກ່ພືດຊະນິດຕ່າງໆ.

| ແຂວງ | ຊະນິດພືດ ( ຫົວໜ່ວຍ: ມ³/ຮຕ ) | | | | | | | |
|---|---|---|---|---|---|---|---|---|
| | ເຂົ້າ | ສາລີ | ຖົ່ວເຫຼືອງ | ຖົ່ວຂຽວ | ຖົ່ວດິນ | ຝ້າຍ | ໝາກໂມ | ພືດຜັກ |
| ຈຳປາສັກ | 1.870 | 0 | 0 | 0 | 0 | 3.52 | 0 | 0 |
| ອັດຕະປື | 1.870 | 0 | 0 | 0 | 0 | 3.52 | 0 | 0 |
| ສາລະວັນ | 1.570 | 0 | 0 | 0 | 0 | 1.86 | 0 | 0 |
| ເຊກອງ | 1.570 | 0 | 0 | 0 | 0 | 1.86 | 0 | 0 |
| ສະຫວັນນະເຂດ | 2.860 | 0 | 0 | 0 | 0 | 3.71 | 4.4 | 0 |
| ຄຳມ່ວນ | 2.860 | 0 | 0 | 0 | | 3.71 | 4.4 | 0 |

**ໝາຍເຫດ:** ຕາຕະລາງຂ້າງເທິງແມ່ນຄວາມຕ້ອງການນ້ຳຂອງພືດໃນລະດູຝົນ

| ແຂວງ | ຊະນິດພືດ ( ຫົວໜ່ວຍ: ມ$^3$/ຮຕ ) | | | | | | | | |
|---|---|---|---|---|---|---|---|---|---|
| | ເຂົ້າ | ສາລີ | ຖົ່ວເຫຼືອງ | ຖົ່ວຂຽວ | ຖົ່ວດິນ | ຝ້າຍ | ໝາກໂມ | ພືດຜັກ | ກາເຟ |
| ຈໍາປາສັກ | 12.540 | 5.186 | 5.806 | 3.286 | 5.097 | 8.068 | 6.357 | 4.187 | 4.580 |
| ອັດຕະປື | 12.540 | 5.186 | 5.806 | 3.286 | 5.097 | 8.068 | 6.357 | 4.187 | 4.580 |
| ສາລະວັນ | 10.100 | 3.326 | 3.706 | 2.146 | 3.281 | 5.099 | 4.030 | 2.590 | 9.290 |
| ເຊກອງ | 10.100 | 3.326 | 3.706 | 2.146 | 3.281 | 5.099 | 4.030 | 2.590 | 9.290 |
| ສະຫວັນ | 11.120 | 4.178 | 4.606 | 2.761 | 4.113 | 6.304 | 5.036 | 3.446 | |
| ຄໍາມ່ວນ | 11.120 | 4.178 | 4.606 | 2.761 | 4.113 | 6.304 | 5.036 | 3.446 | |

**ໝາຍເຫດ:** ຕາຕະລາງຂ້າງເທິງແມ່ນຄວາມຕ້ອງການນໍ້າຂອງພືດໃນລະດູແລ້ງ

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ

# ຂໍ້ແນະນຳ

## ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້)



ຈັດຕັ້ງປະຕິບັດໂດຍ: **CETDU**

(ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ ຂັ້ນສູນກາງ)

ຮ່ວມກັບ:

ໂຄງການ ສົ່ງເສີມ ກະສິກຳ **(LEAP)**